ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ...0375.../ກງ

ນະຄອນຫລວງວຽງຈັນ,ວັນທີ...20 ມັງກອນ 2021

# ແຈ້ງການ

**ຮຽນ:** ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ເປັນເຈົ້າຂອງ ຫລືນຳໃຊ້ຍານພາຫະນະທຸກປະເພດ ໃນຂອບເຂດທົ່ວປະເທດ

**ເລື່ອງ :** ການເສຍຄ່າທາງນຽມທາງ ປະຈຳປີ 2021

- ອີງຕາມ ລັດຖະບັນຍັດ ວ່າດ້ວຍຄ່າທຳນຽມທາງສະບັບເລກທີ 001/ປປທ, ລົງວັນທີ 20 ກັນຍາ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017, ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ຄຳແນະນຳ ຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍຄ່າທຳນຽມທາງ ສະບັບເລກທີ 3455/ກງ ,ລົງວັນທີ 10 ຕຸລາ 2017;

ເພື່ອເຮັດໃຫ້ການເສຍຄ່າທຳນຽມທາງ ປະຈຳປີ 2021 ໄດ້ຈັດຕັ້ງປະຕິບັດທັນຕາມກຳນົດເວລາ ແລະມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ, ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງ ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງທີ່ເປັນເຈົ້າຂອງ ຫລື ນຳໃຊ້ຍານພາຫະນະ ທຸກປະເພດ ໃນຂອບເຂດທົ່ວປະເທດ ຊາບດັ່ງນີ້:

1. ໃນປີ 2021 ໄລຍະເວລາຂອງການເສຍຄ່າທຳນຽມທາງ ແມ່ນຈະສິ້ນສຸດໃນວັນທີ 31 ມີນາ 2021 ຊຶ່ງບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ເປັນເຈົ້າຂອງ ຫລື ນຳໃຊ້ ຍານພາຫະນະທຸກປະເພດ ໃນຂອບເຂດທົ່ວປະເທດ ມີພັນທະເສຍຄ່າທຳນຽມທາງປະຈຳປີ, ຖ້າບໍ່ເສຍຄ່າທຳນຽມທາງຕາມໄລຍະເວລາດັ່ງກ່າວທີ່ໄດ້ກຳນົດໄວ້ ຈະຖືກປັບໃໝຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນ ໂລແມ້ງທີ IV ຂໍ້ທີ 2 ຂອງຄຳແນະນຳ ສະບັບເລກທີ 3455/ກງ, ລົງວັນທີ 10 ຕຸລາ 2017;
2. ກໍລະນີ ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ເປັນເຈົ້າຂອງ ຫລື ນຳໃຊ້ ຍານພາຫະນະ ຫາກຍັງບໍ່ທັນໄດ້ເສຍຄ່າທຳນຽມທາງໃນປີຜ່ານມາ ນອກຈາກໄດ້ເສຍຄ່າທຳນຽມທາງຕາມອັດຕາທີ່ໄດ້ກຳນົດໃນລັດຖະບັນຍັດ ວ່າດ້ວຍຄ່າທຳນຽມທາງຄືນແລ້ວ ຍັງຈະຖືກປະຕິບັດມາດຕະການປັບໃໝດັ່ງນີ້:
   - ຖືກປັບໃໝ 60% ຂອງມູນຄ່າທີ່ຕ້ອງເສຍຄ່າທຳນຽມທາງຕໍ່ປີ ກໍລະນີບໍ່ໄດ້ເສຍຄ່າທຳນຽມທາງ ນັບແຕ່ປີ 2017, 2018 ແລະ 2019;
   - ຖືກປັບໃໝ 40% ຂອງມູນຄ່າທີ່ຕ້ອງເສຍຄ່າທຳນຽມທາງຕໍ່ປີ ກໍລະນີບໍ່ໄດ້ເສຍຄ່າທຳນຽມທາງ ໃນປີ 2020;
3. ການຊຳລະເງິນຄ່າທຳນຽມທາງ ແມ່ນໃຫ້ຊຳລະຜ່ານລະບົບທະນາຄານດ້ວຍ 6 ທາງເລືອກຄື: ຊຳລະຜ່ານລະບົບເຄົາເຕີທະນາຄານ (Counter); ຊຳລະຜ່ານທາງອອນລາຍ (ຊຳລະຜ່ານ BCEL One ຫລື BCEL i-bank ແລະແລະຊ່ອງທາງອອນລາຍທະນາ ຄານຕົວແທນ); ຊຳລະຜ່ານຕູ້ເອທີເອັມ (ATM); ຊຳລະຜ່ານຕູ້ອັດຕະໂນມັດ(Kiosk), ຊຳລະຜ່ານຈຸດໃຫ້ບໍລິການ ທີ່ໄດ້ຮັບອະນຸຍາດ(BCOME) ແລະຊຳລະຜ່ານທະນາຄານຕົວແທນ;

4. ສຳລັບ ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ໄດ້ຊື້ຍານພາຫະນະໃຫມ່ (ພາຫະນະອອກຮ້ານ) ໃນເດືອນຕຸລາ ຫາ ເດືອນ ທັນວາ 2021 ແມ່ນໃຫ້ເລີ່ມເສຍຄ່າທຳນຽມທາງໃນປີຖັດໄປ;

5. ເຈົ້າຫນ້າທີ່ຈະລະຈອນ ຈະເຮັດຫນ້າທີ່ກວດກາ, ຊຸກຍູ້ການເສຍຄ່າທຳນຽມທາງ ແລະນຳໃຊ້ມາດຕະການຕໍ່ຜູ້ລະເມີດການເສຍຄ່າທຳນຽມທາງ ໃນຂອບເຂດທົ່ວປະເທດ;

6. ມອບໃຫ້ພະແນກການເງິນແຂວງ, ນະຄອນຫລວງ ສົມທົບກັບສ່ວຍສາອາກອນປະຈຳແຂວງ, ນະຄອນຫລວງ, ການເງິນເມືອງ, ສ່ວຍສາອາກອນປະຈຳເມືອງ, ນະຄອນ ປະສານສົມທົບກັບການປົກຄອງທ້ອງຖິ່ນ ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຊຸກຍູ້ ເຜີຍແຜ່ ການຈັດຕັ້ງປະຕິບັດການເສຍຄ່າທຳນຽມທາງປະຈຳປີ 2021 ໃຫ້ມີປະສິດທິຜົນ, ໂປ່ງໃສ ແລະ ຮັບປະກັນການເກັບລາຍຮັບດັ່ງກ່າວ ເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ.

ດັ່ງນັ້ນ,ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

ລັດຖະມົນຕີກະຊວງການເງິນ

ກະຊວງການເງິນ ລັດຖະມົນຕີ

ສົມດີ ດວງດີ